ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ


ມະຫາວິທະຍາໄລແຫ່ງຊາດ

ສູນການສຶກສາສິ່ງແວດລ້ອມ ແລະ ການພັດທະນາ

ປີ 2


# ບົດລາຍງານ

## ເລື່ອງ: ໂຄງການປູກໄມ້ເກດສະໜາ ເມືອງວຽງທອງ, ແຂວງ ບໍລິຄໍາໄຊ, ສ ປ ປ ລາວ




ອາຈານນໍາພາ : ຮສ. ສຸພາບ ຄວງວິຈິດ.

ຂຽນໂດຍ : ນ. ອານຸລັກ ກອງມະນີວົງ.

ນ. ປາລະມີ ໄຊຍະເສນ.

ນ. ທິບພາພອນ ອານຸວົງ.

ນ. ຈັນມະລີ ສຸວັນນະຄໍາ.

ນ. ສຸດາພອນ ໄຊຍະສອນ.

ນ. ມະລິສາ ພົມສຸພາ.


ສົກສຶກສາ 2005 - 2006

# ຄຳນຳ

# ( PREFACE )

ໄມ້ເກດສະໜາ ເປັນໄມ້ທີ່ມີລາຄາແພງທີ່ສຸດໃນໂລກ ແລະ ເປັນທີ່ຕ້ອງການຂອງຫລາຍໆ ປະເທດໃນທົ່ວໂລກ. ຜ່ານການສຶກສາຄົ້ນຄ້ວາ ແລະ ຂຽນບົດລາຍງານກ່ຽວກັບໂຄງການປູກໄມ້ ເກດສະໜາ ຢູ່ເມືອງວຽງທອງ, ແຂວງ ບໍລິຄຳໄຊ ມີຈຸດປະສົງ ເພື່ອຢາກສຶກສາວິທີການປູກ. ພ້ອມ ດຽວກັນນັ້ນຍັງໄດ້ສຶກສາຜົນປະໂຫຍດຂອງການປູກໄມ້ເກດສະໜາ ແລະ ການດຳເນີນງານດ້ານ ເສດຖະກິດຂອງໄມ້ເກດສະໜາ.

ການສຶກສາຄົ້ນຄວ້າໃນຄັ້ງນີ້ ໄດ້ນຳໃຊ້ການເກັບຂໍ້ມູນຈາກເອກະສານຕ່າງໆ ເຊິ່ງໄດ້ຂໍ້ມູນ ມາຈາກຫໍສະໝຸດຕ່າງໆ, ກະຊວງກະສິກຳ - ປ່າໄມ້, ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ( STEA ) ເຊິ່ງການສຶກສາຄັ້ງນີ້ມີ ລັກສະນະສັງລວມຂໍ້ມູນແບບລາຍງານທິດສະດີ.

ບົດລາຍງານໃນຄັ້ງນີ້ ຈະເປັນຜົນປະໂຫຍດສຳລັບທ່ານຜູ້ທີ່ສົນໃຈທີ່ຢາກຈະສຶກສາຄົ້ນຄວ້າ ແລະ ຊອກຮູ້ກ່ຽວກັບວິທີການປູກ, ຜົນປະໂຫຍດ ແລະ ເສດຖະກິດຂອງໄມ້ເກດສະໜາ ໃນຂັ້ນຕໍ່ ໄປ. ພ້ອມດຽວກັນບົດລາຍງານສະບັບນີ້ບໍ່ອາດປາສະຈາກຂໍ້ຂາດຕົກບົກພ່ອງ ແລະ ຄວາມຜິດພາດ ໄດ້ຈຶ່ງໄດ້ສະເໜີມາຍັງທ່ານຜູ້ທີ່ສົນໃຈ ແລະ ຮັກການອ່ານທັງຫຼາຍຈົ່ງຊ່ວຍກັນຕຳນິຕິຊົມ ບົດລາຍ ງານຂອງພວກຂ້າພະເຈົ້າດ້ວຍ ເຊິ່ງຄຳຄິດຄຳເຫັນຂອງບັນດາທ່ານຈະເປັນຜົນປະໂຫຍດຢ່າງຍິ່ງໃນ ການປັບປຸງບົດລາຍງານຂອງພວກຂ້າພະເຈົ້າໃນຄັ້ງຕໍ່ໄປ.

# ສາລະບານ

ໜ້າ

* ຄວາມເປັນມາຂອງໂຄງການ........ 1
* ຈຸດປະສົງຂອງການສຶກສາ........ 1
* ຈຸດປະສົງຂອງໂຄງການ........ 1
I. ລັກສະນະຂອງໂຄງການ........ 1
1. ທີ່ຕັ້ງຂອງສະຖານທີ່ໃນການປູກ........ 1
* ສະພາບອາກາດ........ 2
* ປະລິມານນໍ້າຝົນ........ 2
* ຄວາມຊຸ້ມຂອງໜ້າດິນ........ 3
* ທິດທາງ ແລະ ຄວາມແຮງຂອງລົມ........ 3
* ເນື້ອດິນ........ 3
* ແຫລ່ງນໍ້າໃກ້ຄຽງ........ 3
II. ການກະກຽມກ່ອນການປູກ........ 3
III. ຂັ້ນຕອນການປູກໄມ້ເກດສະໜາ........ 3
1. ໄມ້ເກດສະໜາ........ 3
2. ລັກສະນະທົ່ວໄປຂອງໄມ້ເກດສະໜາ........ 4
3. ວິທີຜະລິດເບ້ຍ........ 4
4. ການກໍານົດຈໍານວນເບ້ຍປູກ........ 5
5. ລາຄາຊື້ເບ້ຍເກດສະໜາ........ 6
6. ວິທີປູກ........ 6
7. ການສະກັດສານຂອງໄມ້ເກດສະໜາ........ 6
IV. ຜົນໄດ້ຮັບຂອງໂຄງການ........ 8
1. ດ້ານເສດຖະກິດ........ 8
2. ດ້ານສັງຄົມ........ 9
3. ດ້ານສິ່ງແວດລ້ອມ........ 10
4. ດ້ານການແພດ........ 10
V. ອານາຄົດຂອງໄມ້ເກດສະໜາ........ 10
VI. ສະຫລຸບ........ 12
* ປະໂຫຍດທີ່ຄາດວ່າຈະໄດ້ຮັບຈາກການສຶກສາ........ 12

* **ຄວາມເປັນມາຂອງໂຄງການ**

ແຂວງ ບໍລິຄໍາໄຊ ເປັນແຂວງໜຶ່ງທີ່ມີເນື້ອທີ່ການຜະລິດຢ່າງກວ້າງຂວາງ. ປະຊາຊົນສ່ວນຫລາຍມີອາຊີບເປັນຊາວກະສິກອນ. ລັດຖະບານ ຈຶ່ງໄດ້ມີນະໂຍບາຍໃນການສົ່ງເສີມກະສິກໍາ ດັ່ງນັ້ນ ຈຶ່ງໄດ້ມີການສ້າງໂຄງການປູກໄມ້ເກດສະໜາ ຢູ່ເມືອງ ວຽງທອງ, ແຂວງ ບໍລິຄໍາໄຊ ເຊິ່ງເປັນໂຄງການໜຶ່ງທີ່ນອນຢູ່ໃນ 5 ບູລິມະສິດຂອງແຂວງ ເພື່ອຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນໂດຍໃຫ້ພວກເຂົາມີສ່ວນຮ່ວມໃນໂຄງການດັ່ງກ່າວ. ໂຄງການ ໄດ້ຈັດຕັ້ງປະຕິບັດເລີ່ມແຕ່ປີ 2003 ເປັນຕົ້ນມາ ແລະ ມີແຜນຈັດຕັ້ງປະຕິບັດເຖິງປີ 2014.

* **ຈຸດປະສົງຂອງການສຶກສາ**

- ສຶກສາວິທີການປູກໄມ້ເກດສະໜາ.
- ສຶກສາຜົນປະໂຫຍດຂອງການປູກໄມ້ເກດສະໜາ.
- ສຶກສາດ້ານເສດຖະກິດຂອງໄມ້ເກດສະໜາ.

* **ຈຸດປະສົງຂອງໂຄງການ**

◆ ເພື່ອສົ່ງເສີມບັນດາຊາວກະສິກອນ, ບໍລິສັດ ແລະ ບຸກຄົນ ໃຫ້ຫັນມາປູກໄມ້ເກດສະໜາ ເພື່ອເປັນສິນຄ້າ.

◆ ເພື່ອເປັນສິນຄ້າຍຸດທະສາດ ສ້າງລາຍຮັບເປັນຈໍານວນຫລວງຫລາຍເຂົ້າໃນງົບປະມານຂອງລັດຖະບານ.

◆ ເຮັດໃຫ້ປະຊາຊົນມີວຽກເຮັດງານທໍາ ເພື່ອສ້າງລາຍໄດ້ ໃຫ້ແກ່ເຂົາເຈົ້າຢ່າງໝັ້ນຄົງ.

◆ ປັບປຸງຄຸນນະພາບຂອງຜົນຜະລິດໃຫ້ດີຂຶ້ນ, ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ .

## I. ລັກສະນະຂອງໂຄງການ

### 1. ທີ່ຕັ້ງຂອງສະຖານທີ່ໃນການປູກ

ໂຄງການປູກໄມ້ເກດສະໜາ ຢູ່ເມືອງວຽງທອງ ແຂວງບໍລິຄໍາໄຊ ແມ່ນມີເນື້ອທີ່ 1000 ເຮັກຕາ, ເຊິ່ງຕັ້ງຢູ່ທາງພາກກາງຂອງປະເທດລາວ. ແຂວງ ບໍລິຄໍາໄຊ ເປັນແຂວງໜຶ່ງທີ່ມີຄວາມອຸດົມສົມບູນໄປດ້ວຍພູຜາປ່າໄມ້ ແລະ ດິນແດນອັນກວ້າງຂວາງ, ມີຊາຍແດນຕິດຈອດກັບ 2 ປະເທດ ຄື ຫວຽດນາມ ແລະ ໄທ, ເຊິ່ງມີເສັ້ນທາງຄົມມະນາຄົມອອກສູ່ຫວຽດນາມຢ່າງສະດວກທຸກລະດູ. ສໍາຫລັບການຂົນສົ່ງໄປສູ່ປະເທດໄທແລ້ວ ແມ່ນພຽງແຕ່ຂ້າມນໍ້າຂອງເທົ່ານັ້ນ ກໍ່ຖືວ່າຮອດຊາຍແດນປະເທດໄທ. ແຂວງບໍລິຄໍາໄຊ ປະກອບມີ 6 ຕົວເມືອງ, ປະຊາຊົນມີມູນເຊື້ອດຸໝັ່ນຂະຫຍັນພຽນ, ມີນໍ້າໃຈຮັກຊາດອັນດູດດື່ມ. ໃນການວາງແຜນດໍາເນີນງານໂຄງການປູກໄມ້ເກດສະໜານີ້ ແມ່ນຈະ

ລິງເລີກເນື້ອທີ່ ເພື່ອສຳປະທານໂຄງການຢູ່ ເຂດເມືອງ ວຽງທອງ ເຊິ່ງເຂດດັ່ງກ່າວເປັນເຂດທີ່ມີດິນດອນຕອນຫຍ້າເປົ່າຫວ່າງອັນກວ້າງຂວາງ ແລະ ອຸດົມສົມບູນດີເໝາະແກ່ການເຮັດກະສິກຳປູກຝັງລ້ຽງສັດ.ນອກຈາກນັ້ນ ເມືອງວຽງທອງ ເປັນເມືອງໜຶ່ງທີ່ມີຕົ້ນເກດສະໜາເກີດຂຶ້ນເອງຕາມທຳມະຊາດເປັນຈຳນວນຫລວງຫລາຍ, ສະນັ້ນ ມັນສົມຄວນທີ່ຈະມີການປູກເພີ່ມເຕີມ ເພື່ອຜະລິດເປັນສິນຄ້າຍຸດທະສາດໄດ້. ໃນການລົງທຶນປູກຕົ້ນໄມ້ເກດສະໜານີ້ ຖ້າເຮົາເລືອກພື້ນທີ່ທີ່ບໍ່ເໝາະສົມ ໂອກາດທີ່ຈະສ້າງເປັນໂຄງການປູກໄມ້ເກດສະໜາໃຫ້ສຳເລັດຜົນນັ້ນ ແມ່ນເປັນໄປໄດ້ຍາກ ເພາະມັນຈະມີຜົນສະທ້ອນຕ່າງໆຕາມມາພາຍຫລັງຄື ຈະເຮັດໃຫ້ໂຄງການລົ້ມເຫລວ ເພາະຂາດການວິເຄາະລະອຽດ. ສະນັ້ນພວກເຮົາຈຶ່ງ ໄດ້ຄຳນຶງເຖິງປັດໄຈຕ່າງໆໃນການຊ່ວຍພິຈາລະນາຄັດເລືອກເອົາພື້ນທີ່ໂຄງການ ເຊິ່ງປັດໄຈທີ່ກ່ຽວພັນກັບໂຄງການປູກໄມ້ເກດສະໜາມີຄືດັ່ງນີ້:

* **ສະພາບອາກາດ**

ເມືອງວຽງທອງ ເປັນເມືອງທີ່ຕັ້ງຢູ່ເຂດລະດັບສູງຫ່າງຈາກລະດັບໜ້ານ້ຳທະເລແຕ່ 300 ຫາ 1000 ແມັດ. ມີອາກາດເຢັນເລັກນ້ອຍໃນເວລາກາງຄືນ ມີເມກໝອກປົກຄຸມບໍລິເວນເປັນບາງຊ່ວງລະດູ ເປັນຕົ້ນໃນຊ່ວງລະດູຝົນອຸນຫະພູມປະມານ 13 ˚C ແລະ ສູງສຸດປະມານ 35 ˚C ເໝາະແກ່ການປູກໄມ້ເກດສະໜາ ແລະ ຕົ້ນໄມ້ອຸດສາຫະກຳ ຫລື ຕົ້ນໄມ້ ໃຫ້ໝາກຫລາຍໆຊະນິດໄດ້ເປັນຢ່າງດີອີກດ້ວຍ.

* **ປະລິມານນ້ຳຝົນ**

ການເກັບກຳຂໍ້ມູນດ້ານປະລິມານນ້ຳຝົນນີ້ ແມ່ນພວກເຮົາໄດ້ສັງລວມຈາກ ສະຖານີວັດນ້ຳຝົນກົມອຸຕຸນິຍົມຂໍ້ມູນນ້ຳຝົນນີ້ ເປັນຂໍ້ມູນທີ່ຈຳເປັນ ແລະ ສຳຄັນທີ່ສຸດເພາະວ່າ ໂຄງການປູກໄມ້ເກດສະໜານີ້ ແມ່ນອີງໃສ່ປະລິມານນ້ຳຝົນທຳມະຊາດເປັນສ່ວນໃຫຍ່. ຖ້ານ້ຳຝົນບໍ່ພຽງພໍ ຫລື ຂາດຊ່ວງເປັນໄລຍະຍາວ ກໍ່ສາມາດເຮັດໃຫ້ຕົ້ນເກດສະໜາຕາຍໄດ້. ດັ່ງນັ້ນ ຈຶ່ງເປັນປັດໄຈຫລັກຂອງໂຄງການດັ່ງກ່າວ. ປະລິມານນ້ຳຝົນຂອງເມືອງວຽງທອງ ມີດັ່ງນີ້:

- ນ້ຳຝົນສະເລ່ຍປະຈຳປີປະມານ 2500 - 3000 ມມ.
- ລະດູຝົນເລີ່ມແຕ່ທ້າຍເດືອນພຶດສະພາ ຫາ ເດືອນພະຈິກ.
- ມີຝົນຕົກບໍ່ເປັນປົກກະຕິໃນທ້າຍເດືອນກຸມພາ, ມີນາ, ເມສາ ແລະ ທັນວາ.
- ຈະບໍ່ມີນ້ຳຝົນ ແຕ່ມີນ້ຳໝອກໃນໜຶ່ງເດືອນ ຫລື ໜ້ອຍກວ່າໜຶ່ງເດືອນເຊິ່ງເປັນເວລາທີ່ສັ້ນທີ່ສຸດ.

*   **ຄວາມຊັນຂອງໜ້າດິນ**

ພື້ນທີ່ສ່ວນທີ່ວາງແຜນປູກໄມ້ເກດສະໜານີ້ ແມ່ນບໍ່ສູງຊັນປານໃດຄື: ຈະຢູ່ໃນລະຫວ່າງ 10 ຫາ 35 ອົງສາມຸມ ແມ່ນມີຄວາມເໝາະສົມ. ເຂດດັ່ງກ່າວເປັນເຂດໄຮ່ຮ້າງ ເຊິ່ງເປັນ ເນີນພູ ແລະ ພືນປ່າຊຸດໂຊມເປັນສ່ວນໃຫຍ່.

*   **ທິດທາງ ແລະ ຄວາມແຮງຂອງລົມ**

ທິດທາງຂອງແຮງລົມ ແລະ ຄວາມແຮງຂອງລົມໃນເຂດພື້ນທີ່ໂຄງການນີ້ ເຫັນວ່າບໍ່ມີຄວາມຮຸນແຮງ ທີ່ຈະສາມາດກະທົບຕໍ່ຕົ້ນໄມ້ທີ່ປູກໃຫ້ຫັກໂຄ່ນໄດ້. ອີງຕາມການສຳຫລວດເນື້ອທີ່ຕົວຈິງ ແລະ ຕາມການສອບຖາມນຳປະຊາຊົນທ້ອງຖິ່ນເຂດບໍລິເວນໂຄງການ. ສະນັ້ນເຫັນວ່າເຂດດັ່ງກ່າວມີຄວາມຮັບປະກັນຕໍ່ບັນຫານີ້.

*   **ເນື້ອດິນ**

ເນື້ອດິນໃນບໍລິເວນໂຄງການ ແມ່ນເປັນດິນຜຸພຸ່ຍ ດິນພູໄຟລະເບີດເກົ່າຜ່ານມາໄດ້ຫລາຍລ້ານປີ ເປັນດິນທີ່ມີຝຸ່ນທຳມະຊາດອຸດົມສົມບູນທີ່ສຸດ ເຊິ່ງມີປະລິມານ pH = 6.5

*   **ແຫລ່ງນ້ຳໃກ້ຄຽງ**

ໂຄງການດັ່ງກ່າວ ແມ່ນມີທີ່ຕັ້ງຢູ່ເຂດພູຜາກວ້າງໂຄງ ມີຫ້ວຍນ້ຳຫລາຍສາຍໃນບໍລິເວນດັ່ງກ່າວ ເຊິ່ງໃນລະດູຝົນຈະມີນ້ຳໄຫລຕະຫລອດ ແຕ່ໃນລະດູແລ້ງນ້ຳຈະຂາດຊ່ວງ. ແຕ່ໃນເວລາອັນສັ້ນ ຈະມີນ້ຳໝອກລົງໃບໄມ້ຢູ່ສະເໝີ. ໃນນີ້ທາງໂຄງການ ຈະມີແຜນເຮັດຝາຍຕັນນ້ຳຫ້ວຍໄວ້ເພື່ອເຮັດສວນກ້າເບ້ຍ. ນອກຈາກນັ້ນ ຈະໄດ້ໃຊ້ບໍລິໂພກອີກດ້ວຍ.

## II. ການກະກຽມພື້ນທີ່ກ່ອນການປູກ.

ກ່ອນຈະເລີ່ມການປູກ ກ່ອນອື່ນຕ້ອງມີການຖາງຫຍ້າໃນເຂດພື້ນທີ່ດັ່ງກ່າວ ເພື່ອສະດວກໃນການປູກ.

## III. ຂັ້ນຕອນການປູກໄມ້ເກດສະໜາ

### 1. ໄມ້ເກດສະໜາ

- ຊື່ລາວ — ໄມ້ເກດສະໜາ
- ຊື່ວິທະຍາສາດ — *Agui laria crassana* Pierre exh. lecomte
- ວົງຕະກຸນ — Thymelaeaceac
- ຊື່ອື່ນໆ — Eagle wood ( Trade. eng tram huong(viet)
  Black wood, Aloe wood, Agar wood.

ໄມ້ເກດສະໜາ ເປັນໄມ້ເນື້ອອ່ອນຊະນິດໜຶ່ງ ເຊິ່ງກົມປ່າໄມ້ໄດ້ຈັດເຂົ້າຢູ່ໃນປະເພດໄມ້ຫວງຫ້າມປະເພດທີໜຶ່ງ ຍ້ອນໄມ້ຊະນິດດັ່ງກ່າວເປັນໄມ້ທີ່ມີລາຄາແພງ, ຫາຍາກ ແລະ ໃກ້ຈະສູນພັນຢູ່ໃນ ສ ປ ປ ລາວ, ຕົ້ນໄມ້ເກດສະໜາເປັນໄມ້ຂະໜາດໃຫຍ່ ມີໃບສີຂຽວຕະຫຼອດປີ, ມີຖິ່ນກຳເນີດໃນເຂດຮ້ອນຂອງ ເອເຊຍ (ອິນເດຍ, ຈີນ, ມາເລເຊຍ, ໄທ, ຫວຽດນາມ, ພະມ້າ, ລາວ, ນອກເວ) ສ່ວນໃຫຍ່ ເພິ່ນມັກພົບເຫັນໃນປ່າດົງດິບ ເປັນສ່ວນໃຫຍ່ ເຊິ່ງມີຄວາມສູງປານກາງຈາກລະດັບໜ້ານ້ຳທະເລປະມານ 400-500 ແມັດ ແລະ ມີບາງບ່ອນເກີດໃນບ່ອນທີ່ມີພື້ນທີ່ສູງທ່າງຈາກລະດັບໜ້ານ້ຳທະເລເຖິງ 1.100 ແມັດ.

## 2. ລັກສະນະທົ່ວໄປຂອງໄມ້ເກດສະໜາ

ໄມ້ເກດສະໜາ ເປັນໄມ້ຢືນຕົ້ນຂະໜາດໃຫຍ່ ມີໃບຂຽວຕະຫຼອດປີ ແລະ ມີຖິ່ນກຳເນີດທາງແຖບຮ້ອນຂອງທະວີບອາຊີ ໂດຍທົ່ວໄປ ມີຊື່ເອີ້ນຫຼາຍຊື່ເຊັ່ນ: ໄມ້ຫອມ, ໄມ້ດຳ, ໄມ້ພວງ. ໄມ້ເກດສະໜາ ມີລັກສະນະເນື້ອໄມ້ອ່ອນ ສີຂາວນວນ ມີຄຸນປະໂຫຍດໜ້ອຍບໍ່ມີລາຄາ ເວັ້ນແຕ່ຈະມີການປ່ຽນແປງ ຂອງເນື້ອໄມ້ໄປ ຈາກສີຂາວໄປເປັນສີນ້ຳຕານ ແລະ ອາດຈະເປັນສີເຂັ້ມຈົນເປັນສີດຳ ໃນທີ່ສຸດ ມີກິ່ນຫອມເມື່ອນຳໄປເຜົາໄຟ ສ່ວນຂອງເນື້ອໄມ້ທີ່ມີກິ່ນຫອມນັ້ນ ມັກເອີ້ນກັນວ່າ ແກ່ນເກດສະໜາເຊິ່ງມີລາຄາແພງທີ່ສຸດ.

## 3. ວິທີຜະລິດເບ້ຍ

ໄມ້ເກດສະໜາຈະອອກດອກໃນຊ່ວງ ເດືອນເມສາ ຫາ ເດືອນພຶດສະພາ ໝາກຂອງມັນຈະແກ່ໃນຊ່ວງເດືອນພຶດສະພາ ຮອດເດືອນມິຖຸນາ ຫຼື ບາງບ່ອນໝາກຂອງມັນຈະແກ່ປະມານເດືອນກໍລະກົດ ຫາ ເດືອນສິງຫາ.

ເມື່ອໝາກຂອງມັນແກ່ ຈະແຕກເປັນ 2 ຊີກ ມີຊີວິດຢູ່ໄດ້ໄລຍະ 1-2 ອາທິດ ເພື່ອກ້າແລ້ວງອກດີ, ອາທິດທີ 4 ກໍ່ຈະເລີ່ມປົ່ງໃບອອກ.

**ການກະຕຸ້ນແກ່ນ:** ໃຫ້ຈັດການກະກຽມດິນ ໃຫ້ສາມາດລະບາຍນ້ຳ ແລະ ອາກາດໄດ້ດີຫວ່ານແກ່ນເກດສະໜາ ແລະໂຮຍທັບລົງບາງໆດ້ວຍຊາຍ ຫຼື ປັກເມັດລົງໃນຊາຍໂດຍເອົາທາງຫົວຂຶ້ນ ຫົດນ້ຳໃຫ້ຊຸ່ມທັງເຊົ້າ ແລະ ແລງ ເມັດຈະແຕກງອກພາຍໃນ 1-2 ອາທິດ.

ຖ້າປ່ອຍໃຫ້ເບ້ຍໃຫຍ່ຢູ່ໃນໜານປູກດິນດົນຈົນເກີນໄປ ຈະເຮັດໃຫ້ຮາກຍາວເກາະຕິດດິນຖອນຮາກກໍ່ຈະຂາດ ເມື່ອຍ້າຍມາຊຳໃນຖົງກໍ່ຈະຕັ້ງຕົວຊ້າ.




## 4. ການກຳນົດຈຳນວນເບ້ຍປູກ

ໃນການກຳນົດໄລຍະຫ່າງປູກໄມ້ເກດສະໜາ ແມ່ນມີຂະໜາດຕ່າງໆແຕກຕ່າງກັນ ອີງຕາມໄລຍະເວລາຂອງແຜນການປູກຄື: ຈະປູກໃນໄລຍະເວລາ 7, 8, 9, 10... ປີ ຕາມຕ້ອງການເພື່ອກຳນົດຄວາມເຕີບໃຫຍ່ຂອງໄມ້ ເຊິ່ງຈະມີໄລຍະຫ່າງແຖວປູກມີຫລາຍແບບເຊັ່ນ: 8 x 8 m, 4 x 4 m, 3 x 3 m, 2 x 2 m. ສະນັ້ນ ໃນນີ້ແມ່ນອີງຕາມແຜນການຄາດຄະເນເລື່ອງການຕະຫລາດ ພວກເຮົາໄດ້ກຳນົດໄລຍະເວລາເກັບຜົນຜະລິດ ໄມ້ເກດສະໜາທັງໝົດປະມານ 12 ປີ ຈຶ່ງເລືອກເອົາຂະໜາດ 4 x 4 m. ດັ່ງນັ້ນ ໃນ 1 ເຮັກຕາ ຈະສາມາດປູກໄມ້ເກດສະໜາໄດ້ເຖິງ 625 ຕົ້ນ. ນອກຈາກນັ້ນ ຍັງໄດ້ມີແຜນການປູກພືດລົ້ມລຸກ ເຊິ່ງສາມາດເປັນທຸລະກິດ ເປັນການຊ່ວຍໂຄງການໃສດ້ານທຶນຮອນຈຳນວນໜຶ່ງອີກດ້ວຍ.



## 5. ລາຄາຊື້ເບ້ຍເກດສະໜາ

ລາຄາໄມ້ເກດສະໜາ ໂດຍອີງຕາມຕະຫລາດເບ້ຍໄມ້ວຽງຈັນ ຈະຕົກຢູ່ປະມານ 5000 - 15000 ກີບຕໍ່ເບ້ຍ, ແຕ່ທາງໂຄງການໄດ້ມີແຜນການສ້າງສວນກ້າເບ້ຍໄມ້ເກດສະໜາເອງ ສ່ວນໜຶ່ງເພື່ອຮັບປະກັນໃຫ້ແກ່ການສະໜອງເບ້ຍໃຫ້ພຽງພໍ ແລະ ທ່ວງທັນແກ່ໂຄງການຄື: ດັ່ງທີ່ກ່າວມາຂ້າງເທິງນັ້ນ ເຊິ່ງຈະເຮັດໃຫ້ເບ້ຍໄມ້ເກດສະໜາມີລາຄາປະມານ 5000 ກີບຕໍ່ເບ້ຍ.

## 6. ວິທີປູກ

ໄມ້ເກດສະໜາເປັນໄມ້ປ່າໃນປະເທດເຂດຮ້ອນທີ່ປູກງ່າຍ ປູກໄດ້ໃນດິນຫລາຍຊະນິດທັງດິນໜຽວ, ດິນໂຄນ ແລະ ດິນປະສົມຊາຍ ປູກໄດ້ທຸກໆພື້ນທີ່ຂອງປະເທດລາວ ມີອັດຕາການເຕີບໂຕໄວ ແລະ ສະໝ່ຳສະເໝີ. ສະນັ້ນ ຈຶ່ງມີອາຍຸຍືນຍາວໄດ້ຫລາຍສິບປີ ແລະ ສ່ວນໃຫຍ່ມັກເກີດຂຶ້ນໃນປ່າດົງດິບທີ່ຊຸ່ມຊື່ນໃນພື້ນທີ່ຮາບສູງ ເປັນສ່ວນໃຫຍ່. ນອກຈາກນັ້ນ ໄມ້ເກດສະໜາເປັນໄມ້ທີ່ຕ້ອງການຄວາມຊຸ່ມສູງ, ມີຄວາມຕ້ອງການແສງແດດຫລາຍແຕ່ບໍ່ຕ້ອງການອາກາດທີ່ແຫ້ງແລ້ງ ຕໍ່ເນື່ອງກັນຍາວນານ. ເບ້ຍໄມ້ເກດສະໜາທີ່ຈະນຳມາປູກຈະມີຄວາມສູງປະມານ 50 ຫາ 80 ຊມ ຂຶ້ນໄປ ແລະ ມີອາຍຸບໍ່ຕ່ຳກວ່າ 8 ເດືອນ. ການຂຸດຂຸມປູກໄມ້ເກດສະໜາໂດຍທົ່ວໄປແລ້ວ ແມ່ນໃຫ້ກວ້າງ, ຍາວ, ເລິກປະມານ 50 ຊມ ເຊິ່ງໃຫ້ໃຫຍ່ກວ່າຖົງຢາງ, ແຍກດິນຊັ້ນເທິງໄວ້ເຮັດດິນປະສົມ ແລະ ໂດໂລໄມ ແນວລະ 50 ຫາ100 ກຣາມ. ຝຸ່ນໝັກ ( ຝຸ່ນຄອກ, ຝຸ່ນຂີ້ເຫຍື້ອ ຫລື ຝຸ່ນອິນຊີອື່ນໆ ) ປະມານໜຶ່ງສ່ວນສາມຂອງດິນ ແລ້ວ ປະສົມໃຫ້ເຂົ້າກັນ.

## 7. ການສະກັດສານຂອງໄມ້ເກດສະໜາ

ໃນເມື່ອກ່ອນນັກຊຸດຄົ້ນເຄື່ອງປ່າຂອງດົງ ຈະໃຊ້ພ້າ ຫລື ຂວານ ເຈາະກວດເບິ່ງບາງສ່ວນຂອງຕົ້ນເກດສະໜາ ເມື່ອແນ່ໃຈວ່າມີໄມ້ຫອມເກີດຂຶ້ນຫລືບໍ່, ຖ້າມີກໍ່ມັກຈະປ່ຳຕົ້ນນັ້ນລົງມາ ຖ້າບໍ່ມີກໍ່ຈະປະຕົ້ນເກດສະໜາຕົ້ນນັ້ນໄວ້ກ່ອນ ແລະ ຈະກັບມາກວດເບິ່ງອີກ ໃນເວລາກັບມາຊຸດຄົ້ນເຄື່ອງປ່າຂອງດົງໃນເທື່ອໜ້າ, ດ້ວຍວິທີນີ້ ຈຶ່ງເຮັດໃຫ້ເປັນການຄົ້ນພົບໂດຍບັງເອີນວ່າບໍລິເວນເນື້ອໄມ້ເກດບ່ອນມີບາດແຜທີ່ຖືກຂວານຟັນເອົາໄວ້ກ່ອນໜ້ານັ້ນ ຄ່ອຍໆເກີດສານເກດແຊກຊຶມລົງໃນເນື້ອໄມ້ ເຊິ່ງປະມານ 6 ຫາ 8 ເດືອນເນື້ອໄມ້ກໍ່ຈະປ່ຽນຈາກສີຂາວເປັນສີເຫລືອງແກ່ ຫລື ສີນ້ຳຕານອ່ອນ ຖ້າດົນກວ່ານີ້ສີກໍ່ຈະເຂັ້ມຂຶ້ນ. ຖ້າປະໄວ້ຈັກ 2-3 ປີ ກໍ່ຈະເປັນສີດຳ ແລະ ລາຄາກໍ່ຈະສູງ.

ປັດຈຸບັນ, ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມຂອງລາວເຮົາ ໄດ້ກາຍເປັນອົງກອນທຳອິດຂອງໂລກທີ່ຄົ້ນພົບເຊື້ອລາທີ່ສາມາດກະຕຸ້ນໄມ້ເກດສະໜາ ໃຫ້ກາຍເປັນໄມ້ເນື້ອດຳທີ່ມີປະສິດທິຜົນທີ່ສຸດ ແລະ ໃຊ້ເວລາໃນການກະຕຸ້ນສັ້ນທີ່ສຸດ.

ເຊື້ອລາທີ່ພວກເຮົາຄົ້ນພົບ ເປັນເຊື້ອລາຂອງໄມ້ເກດໂດຍສະເພາະ ແລະ ສາມາດໃຊ້ເວລາ ພຽງເດືອນດຽວ ທຳປະຕິກິລິຍາກັບໄມ້ເກດສະໜາໃຫ້ເຫັນຜົນ ແລະ ພວກເຮົາຮັບປະກັນວ່າ ໄມ້ທີ່ໄດ້ຮັບການກະຕຸ້ນ ຈະໄດ້ຜົນຮ້ອຍສ່ວນຮ້ອຍ.



ເຊື້ອລານີ້ ໄດ້ຖືກໃສ່ຊື່ວ່າ ***ລາວຊຸບເປີ ອາກາວູດ*** ເຊິ່ງເປັນຊື່ພາສາລາວປະສົມສາກົນ ເພື່ອວ່າໃຫ້ສາກົນຮັບຮູ້ງ່າຍ. ອົງການວິທະຍາສາດ ໄດ້ເລີ່ມເຮັດການຄົ້ນຄວ້ານີ້ ມາຕັ້ງແຕ່ປີ 1986 ໂດຍເລີ່ມຈາກການຂະຫຍາຍເບ້ຍໄມ້ເກດສະໜາ. ເຊື້ອລາ ໄດ້ນຳໄປທົດລອງກັບໄມ້ເກດສະໜາຈາກ 3 ເຂດຄື ແຂວງ ອຸດົມໄຊ, ບໍລິຄຳໄຊ ແລະ ແຂວງ ຈຳປາສັກ ແລະ ປະກົດວ່າ ໄມ້ຈາກ ແຂວງ ບໍລິຄຳໄຊ ທຳປະຕິກິລິຍາໄວກວ່າເຂດອື່ນໆເຖິງ 5 ເທົ່າ. ໝາຍຄວາມວ່າ ພັນໄມ້ເກດສະໜາ ຈາກ ແຂວງ ບໍລິຄຳໄຊ ເປັນພັນທີ່ດີທີ່ສຸດຂອງປະເທດລາວ.



ເຊື້ອລາທີ່ຄົ້ນພົບນີ້ບໍ່ມີສ່ວນເຈືອປົນຂອງທາດເຄມີແລະບໍ່ແມ່ນທາດແຫລວ. ມັນຖືກເພາະລ້ຽງໃນເນື້ອໄມ້ ແລະ ສາມາດນຳໄປໃຊ້ກັບໄມ້ເກດສະໜາດ້ວຍວິທີງ່າຍໆ ແລະ ບໍ່ເປັນອັນຕະລາຍຕໍ່ມະນຸດ. ໝາຍຄວາມວ່າເຈົ້າຂອງສວນ ສາມາດນຳເອົາເຊື້ອລານີ້ໄປໃສ່ໄມ້ດ້ວຍຕົນເອງ. ຜູ້ນຳໃຊ້ພຽງແຕ່ເຈາະໄມ້ເກດສະໜາ ໃຫ້ເລິກປະມານ 7 ຊມ ເຊິ່ງພໍດີກັບແທ່ງທີ່ບັນຈຸເຊື້ອລາ, ຈາກນັ້ນກໍ່ຕອກແທ່ງເຊື້ອລານັ້ນເຂົ້າໄປ ກໍ່ຖືວ່າສຳເລັດການກະຕຸ້ນສານໄມ້ເກດສະໜາແລ້ວ. " ເຊື້ອລາທີ່ພວກເຮົາຄົ້ນພົບສາມາດນຳໃຊ້ໄດ້ກັບໄມ້ເກດທີ່ມີອາຍຸ 5 ຫາ 6 ປີ ແລະ ສາມາດເອົາເຂົ້າຈຸດໃດຂອງລຳຕົ້ນກໍ່ໄດ້ ". ຫລັງຈາກການກະຕຸ້ນ ໄດ້ 5 ປີ ສານນັ້ນຈະລົງເລິກໄປເຖິງຮາກ ເຊິ່ງສາມາດນຳໄປຂາຍໄດ້ທັງ ຕົ້ນທັງຮາກ.

## IV. ຜົນໄດ້ຮັບຂອງການປູກໄມ້ເກດສະໜາ

### 1. ດ້ານເສດຖະກິດ

ປະຈຸບັນກໍ່ຍັງມີຫລາຍປະເທດໃນໂລກ ທີ່ຫາຊື້ໄມ້ເກດສະໜາເປັນຕົ້ນຢູ່ເຂດອາຣັບ ຢູ່ອາຊີ ເຊັ່ນ : ອິນເດຍ, ກາຕ້າ, ແລະປອກຕຸຍການ. ຍັງມີລາຍງານກ່ຽວກັບໄມ້ເກດສະໜາວ່າ ລາຄາໄມ້ເກດສະໜາແມ່ນສູງເຖິງ 100-1000 $/1Kg ຂຶ້ນກັບຄຸນນະພາບຂອງໄມ້ ສ່ວນລາຄານ້ຳມັນເກດສະໜາ ທີ່ສະກັດຈາກໄມ້ຂາວທຳມະດາ ( ນ້ຳມັນລະດັບສາມ ) ແມ່ນມີລາຄາ 8 ແສນກີບ ຕໍ່ໂຕລາ ( 1 ໂຕລາ = 12,5 ຊີຊີ ) ແຕ່ນ້ຳມັນທີ່ສະກັດ ຈາກໄມ້ທີ່ມີຮອຍດຳ ( ລະດັບສອງ ) ຈະມີລາຄາ 1.000.000 - 1.300.000 k ຕໍ່ໂຕລາ ໂດຍຂຶ້ນກັບສາຍພັນຂອງເກດສະໜາ.

ສ່ວນຢູ່ປະເທດເຮົາໄດ້ນຳໃຊ້ສິ້ນສ່ວນຂອງໄມ້ເກດສະໜາມາເປັນສ່ວນປະສົມຂອງທູບຫອມ. ຈາກການສຶກສາມາເຖິງລະດັບນີ້ເຊື່ອຄາດ ໝາຍວ່າ ໃນອະນາຄົດ ນັກວິທະຍາສາດກ່ຽວກັບພືດກໍ່ຈະເຂົ້າມາມີສ່ວນໃນການ ທົດລອງເຮັດສານເຄມີຕ່າງໆທີ່ໄດ້ຈາກຕົ້ນເກດສະໜາ ຈະເຮັດໃຫ້ຕົ້ນເກດສະໜາສາມາດຜະລິດສານຕາມທີ່ຕ້ອງ ການຫຼາຍຂຶ້ນ.

ສຳລັບຕະຫຼາດໂດຍທົ່ວໄປທີ່ມີຢູ່ໃນປະຈຸບັນນີ້ ຈະເປັນການຮັບຊື້ແກ່ນໄມ້ເກດສະໜາ ແລະຄຸນນະພາບຕ່າງໆ ໃນປະເທດໃກ້ຄຽງກໍ່ຄື : ມີໂຮງງານສະກັດທົ່ວນ້ຳຫອມ ຢູ່ແຂວງ ພະນະຄອນສີອາຍຸທະຍາ, ແຂວງ ປາຈິນບູລີ, ແຂວງ ສະແກ້ວ ປະເທດໄທ ເຊິ່ງຍິນດີຮັບຊື້ໄມ້ເກດສະໜາຄຸນນະພາບຕ່ຳ ເປັນວັດຖຸດິບນຳໄປປ້ອນໂຮງງານສະກັດນ້ຳຫອມມີຄຸນນະພາບດີ, ເຊິ່ງປະຈຸບັນສ່ວນໃຫຍ່ພວກເຂົາຈະເກັບຊື້ໄມ້ເກດສະໜາ ມາຈາກສະຖານທີ່ຕ່າງໆໃນພື້ນທີ່ໃກ້ຄຽງເຊິ່ງການຊື້ຂາຍຂອງພວກເຂົາຈະມີການທົດສອບຄຸນນະພາບ ຈາກການນຳສິ້ນສ່ວນໄມ້ຕົວຢ່າງມາຈູດເຜົາໄຟ ແລະ ດົມເບິ່ງລວມທັງສີຂອງໄມ້ ຂະໜາດສິ້ນສ່ວນໄມ້, ຮູບຮ່າງສິ້ນສ່ວນໄມ້ ເຊິ່ງເປັນອົງປະກອບທີ່ສຳຄັນຂອງການຕັ້ງລາຄາຂອງໄມ້ເກດສະໜານຳດ້ວຍ, ເຊິ່ງມີລາຄາແຕ່ 200 ບາດ ( ສະກຸນເງິນໄທ ) ເຖິງ 1,500 ບາດ/Kg ໄມ້ເກດສະໜາ.

## ສັງລວມແຜນການຄາດຄະເນລາຍຮັບເງິນຕາຕ່າງປະເທດໃນໄລຍະຂາຍທ່ອນນ້ຳຫອມຂອງ ໂຄງການປູກສວນໄມ້ເກດສະໜາ 1000 ເຮັກຕາ ຢູ່ເມືອງວຽງທອງ ແຂວງບໍລິຄຳໄຊເລີ່ມຂາຍ ແຕ່ປີ 2003 - 2014

ຫົວໜ່ວຍ: ໂດລາ

| ລ/ດ | ລາຍການສິນຄ້າ ສົ່ງອອກ | ປີ2007 | ປີ 2008 | ປີ 2009 | ປີ 2010 | ປີ 2011 | ປີ 2012 | ປີ 2013 | ປີ 2014 |
|---|---|---|---|---|---|---|---|---|---|
| 1. | ທ່ອນນ້ຳຫອມເກດ ສະໜາ | 468,750 | 1,875,000 | 2,812,500 | 4,218,750 | 11,718,750 | 14,648,438 | 17,578,125 | 32,087,054 |
| | ລວມ : | 468,750 | 1,875,000 | 2,812,500 | 4,218,750 | 11,718,750 | 14,648,438 | 17,578,125 | 32,087,054 |

## ແຜນການດຸ່ນດ່ຽງລາຍຮັບ - ລາຍຈ່າຍ ຂອງໂຄງການປູກໄມ້ເກດສະໜາ 1000 ເຮັກຕາຢູ່ເມືອງວຽງທອງແຂວງບໍລິຄຳໄຊ ແຕ່ປີ 2003 - 2014

| | | |
|---|---|---|
| 1. | ລາຍຮັບຈາກການຂາຍ | 85,407,366.07 ໂດລາ |
| 2. | ລວມລາຍຈ່າຍຕົ້ນທຶນການປູກສວນໄມ້ເກດສະໜາ | 8,977,380.46 ໂດລາ |
| 3. | ກຳໄລລວມ | 76,429,985.6 ໂດລາ |
| 4. | ຊຳລະທຶນກູ້ຢືມ | 3,020,000 ໂດລາ |
| 5. | ຄ່າສຳປະທານທີ່ດິນ | 36,000 ໂດລາ |
| 6. | ຄ່າອາກອນລາຍໄດ້ | 4,270,368.3 ໂດລາ |

2. ດ້ານສັງຄົມ

ໃນການດຳເນີນການປູກໄມ້ເກດສະໜານີ້ ພວກເຮົາຍັງໄດ້ມີວິທີການຈ້າງງານປະຊາຊົນທ້ອງຖິ່ນເປັນຈຳນວນຫລວງຫລາຍກວ່າການນຳໃຊ້ອຸປະກອນ ເຊິ່ງການດຳເນີນງານຕາມຂັ້ນຕອນໃນການປູກສວນໄມ້ເກດສະໜາ ໃນແຕ່ລະປີນັ້ນຕ້ອງໃຊ້ແຮງງານປະມານ 80-90 ຄົນ/ເຮັກຕາ. ສະນັ້ນ ຕາມແຜນຂອງໂຄງການແລ້ວ ແມ່ນຈະທຳການປູກໃນເນື້ອທີ່ 1.000 ເຮັກຕາ. ສະນັ້ນ ປະຊາຊົນກໍ່ຈະມີລາຍໄດ້ໃນການປູກໄມ້ເກດສະໜາອີກດ້ວຍ.

3. **ດ້ານສິ່ງແວດລ້ອມ.**

ໃນການປູກໄມ້ເກດສະໜາ ນອກຈາກຊ່ວຍສ້າງລາຍໄດ້ໃຫ້ເສດຖະກິດແລ້ວ ຍັງໃຊ້ດິນເປົ່າຫວ່າງແລະເສື່ອມໂຊມໃຫ້ມີປະໂຫຍດ. ຕ້ານການຊະລ້າງ, ການພັງທະລາຍຂອງດິນ ອີກດ້ວຍ.

4. **ດ້ານການແພດ**

ໄມ້ເກດສະໜາເປັນ ຢາດີຫາຍາກ ແລະ ມີລາຄາແພງ ມີຄຸນປະໂຫຍດຕໍ່ເສັ້ນປະສາດ, ກະເພາະອາຫານ, ລຳໄສ້, ຢາແກ້ເຈັບທ້ອງ ແລະ ໝາກໄຂ່ຫຼັງ, ຮາກ ບຳລຸງກະເພາະ, ຂີ້ກະຍື, ຂັບປັດສະວະ, ບັນເທົາອາການເຈັບ ແລະ ລະງັບປະສາດ, ໃຊ້ໃນຮູບຢາຝຸ່ນ ກິນມື້ໜຶ່ງ 3 - 4 g ເຊິ່ງຕຳລາຢາທີ່ປະກອບສ່ວນປະສົມດັ່ງນີ້:

- ໄມ້ເກດສະໜາ 10 g
- ເປືອກແຄນາງ 10 g
- ໝາກແໜ່ງ 8 g
- ກ້ານພູ 10 g

**ຄຸນປະໂຫຍດ:** ບົດເຂົ້າກັນໃຫ້ເປັນຝຸ່ນລະອຽດ ກິນເທື່ອລະ 1 g ມື້ໜຶ່ງ 3 - 4 ຄັ້ງ. ເປັນຢາປົວເຈັບທ້ອງ, ແກ້ເຈັບກະເພາະອາຫານ ແລະອື່ນໆ. ນອກຈາກໄມ້ ແລະ ນ້ຳມັນທີ່ມີຄຸນປະໂຫຍດທາງດ້ານເສດຖະກິດ ແລະ ທາງດ້ານການແພດແລ້ວ ຍັງມີປະໂຫຍດສະເພາະຕົວຕື່ມອີກເຊັ່ນ: ນ້ຳຫອມເກດສະໜາ. ນອກຈາກຈະຄົງຕົວຢູ່ກັບຜິວຮ່າງກາຍໄດ້ດີແລ້ວ ຍັງມີປະໂຫຍດໃນການໄລ່ຕົວໄຮຂະໜາດນ້ອຍ ໃນຂະນະດຽວກັນນັ້ນກໍ່ໃຊ້ແຕ່ງກິ່ນນ້ຳຫອມ.

V. **ອະນາຄົດຂອງໄມ້ເກດສະໜາ**

ຈາກການຕື່ນຕົວຂອງປະຊາຊົນທົ່ວໄປໃນການອະນຸລັກ ແລະ ສົ່ງເສີມໃນການປູກໄມ້ເກດສະໜາ ເຮັດໃຫ້ຊາວກະສິກອນຢູ່ຫຼາຍແຫ່ງ ເຊິ່ງເມື່ອກ່ອນເຄີຍປູກແຕ່ໄມ້ສັກໄດ້ຫັນມາສູ່ການປູກເກດສະໜາເປັນສວນ ແລະ ກໍ່ມີລູກຄ້າຕອບຮັບໂຄງການນີ້ ນັບມື້ນັບຫຼາຍຂຶ້ນ. ຄ່າໃຊ້ຈ່າຍການສ້າງໂຄງການສວນເກດສະໜາບໍ່ແຕກຕ່າງໄປຈາກສວນປູກໄມ້ສັກ ເພາະໃນອະນາຄົດເບ້ຍກໍ່ຈະມີລາຄາຕ່ຳລົງມາໃກ້ຄຽງກັບໄມ້ສັກ ອາດຈະໃຊ້ປູກດ້ວຍຈຳນວນຕົ້ນຫຼຸດລົງ ເພາະສາມາດທີ່ຈະປູກແລ້ວສາມາດທິດນຳໄດ້ກະຈາຍທົ່ວພື້ນທີ່ ເພື່ອຊັກຈູງໃຫ້ເກີດການສ້າງກິ່ງຂອງເກດສະໜາ ອອກມາເປັນຈຳນວນຫລາຍ,ກິ່ງເຫລົ່ານີ້ ເມື່ອໃຫຍ່ຂຶ້ນມາ ກໍ່ນຳມາໃຊ້ເປັນປະໂຫຍດໃນການສ້າງໄມ້ເກດສະໜາໄດ້ທັງໝົດ ເຊິ່ງບໍ່ຄືກັບໄມ້ສັກທີ່ຈະຕ້ອງລິກິ່ງອອກ ເພື່ອໃຫ້ລຳຕົ້ນຈະເລີນເຕີບໂຕ. ຂໍ້ມູນດັ່ງກ່າວນີ້ພວກເຮົາກໍ່ສາມາດທີ່ຈະຫຼຸດຈຳນວນຕົ້ນຕໍ່ໄລ່ ອາດຈະເຫຼືອພຽງແຕ່ 200 ຕົ້ນຕໍ່ໄລ່ ຫຼື ເຫຼືອພຽງແຕ່ 100 ຕົ້ນຕໍ່ໄລ່ ກໍ່ຈະເປັນການຫຼຸດຄ່ານ້ຳແລະສາຍຢາງໄດ້ຫຼາຍ. ຖ້າປຽບຈາກໄມ້ສັກ 400 ຕົ້ນຕໍ່ໄລ່

ມາເປັນເກດສະໜາ 100 ຕົ້ນຕໍ່ໄລ່ ແລ້ວໃຊ້ຕົ້ນເກດສະໜາທີ່ໃຫຍ່ພໍສົມຄວນປຸ່ນຈາກລະບົບນ້ຳທິດມາເປັນໄມໂຄຣສະປີງເກີ ຄ່າໃຊ້ຈ່າຍໃນການລົງທຶນຂອງເຈົ້າຂອງໂຄງການ ກໍ່ຈະແຕກຕ່າງກັນ ແຕ່ກໍ່ຈະມີສິ່ງຈູງໃຈໄດ້ນັ້ນກໍ່ຄືໄມ້ສັກ ຖ້າປູກໄດ້ແລ້ວກໍ່ຈະໃຫ້ມີລາຍໄດ້ປະຈຳ ຈະຕ້ອງປູກແຊມດ້ວຍຕົ້ນຫວາຍ ແຕ່ໃນສວນເກດສະໜາປະມານປີທີ 5 ເປັນຕົ້ນໄປ ສາມາດທີ່ຈະທຳໄມ້ປາກຂວານອອກຈຳໜ່າຍໂດຍມີລາຍໄດ້ທຸກໆປີ. ຖ້າເປັນໂຄງການໄລຍະຍາວ ກໍ່ອາດຈະທຳໄມ້ເປັນໄມ້ແກ່ນໄດ້ອີກດ້ວຍ.

ນ້ຳຫອມເກດສະໜາເປັນນ້ຳຫອມທີ່ຂາຍເຂົ້າສູ່ວົງການນ້ຳຫອມ ຂອງຕະຫຼາດໂລກ. ຢູໂຣບໃຊ້ປຸງແຕ່ງກິ່ນນ້ຳຫອມອື່ນໆ, ເມື່ອມີສູດສະເພາະຕົວ ກໍ່ຈະໄດ້ກິ່ນນ້ຳຫອມສະເພາະຕົວ ເຊິ່ງຊາວຕາເວັນອອກກາງຕ່າງກໍ່ນິຍົມຊົມໃຊ້ນ້ຳຫອມເຫຼົ່ານີ້. ນ້ຳຫອມເກດສະໜາ ນອກຈາກຈະຄົງທົນຢູ່ກັບຜິວກາຍໄດ້ດົນ ຍັງມີຄຸນປະໂຫຍດໃນການໄລ່ຕົວໄຮຂະໜາດນ້ອຍ ເຊິ່ງອາດຈະເກາະຢູ່ຕາມຂົນຂອງຜູ້ທີ່ມີຂົນຢູ່ຕາມລຳຕົວ. ໃນຂະນະດຽວກັນນັ້ນ ກໍ່ໃຊ້ແຕ່ງກິ່ນນ້ຳຫອມສຳລັບຜູ້ຍິງທົ່ວໂລກ. ກໍລະນີທີ່ຢ້ານວ່າ ນ້ຳຫອມທີ່ສະກັດຈາກເກດສະໜາຈະຂາຍບໍ່ໄດ້ ກໍ່ລອງຄິດເບິ່ງວ່າ ຜູ້ຍິງທັງໂລກບໍ່ມີຜູ້ໃດບໍ່ຕ້ອງການໃຊ້ນ້ຳຫອມ ແລະ ເປັນໄປບໍ່ໄດ້ທີ່ຈະເຮັດໃຫ້ນ້ຳຫອມສະກັດຈາກເກດສະໜາຂາຍບໍ່ໄດ້.

ໄມ້ເກດສະໜາທີ່ຜະລິດເປັນໄມ້ແກ່ນ ມີຕະຫຼາດສຳຄັນກໍ່ຄື ຕາເວັນອອກກາງ ແລະ ຊາວມຸດສະລິມທົ່ວໂລກ ບັນຫາໃນປະຈຸບັນນີ້ມີຢູ່ບ່ອນວ່າ ສິນຄ້າບໍ່ພໍກັບຄວາມຕ້ອງການຂອງຕະຫຼາດ ແລະລາຄາແພງຈົນກະທັ້ງເຮັດໃຫ້ມີຄົນຈຳນວນບໍ່ໜ້ອຍ ສ່ຽງທີ່ຈະຫາເຄື່ອງປ່າຂອງດົງນຳມາຂາຍ ເຊິ່ງກໍ່ຍິ່ງເປັນການທຳລາຍສະພາບຊັບພະຍາກອນທຳມະຊາດ. ແຕ່ໃນອີກປະມານ 10 ກ່ວາປີຂ້າງໜ້າກໍ່ຈະເລີ່ມມີໄມ້ເກດສະໜາທີ່ຜະລິດເປັນໄມ້ແກ່ນ ຄຸນນະພາບສູງອອກຈຳໜ່າຍ. ກ່ວາຈະເຖິງ 10 ປີນັ້ນ ຈຳນວນໄມ້ທີ່ຢູ່ໃນທຳມະຊາດກໍ່ຈະຖືກຕັດລົງຫຼາຍ ແລະ ລາຄາກໍ່ຈະແພງຕາມໆກັນໄປຕາມລຳດັບ. ສ່ວນທີ່ຢ້ານກັນວ່າ ຜູ້ຊື້ບໍ່ມີກຳລັງຊື້, ເມື່ອເບິ່ງເຖິງການເປັນປະເທດຜູ້ຂາຍນ້ຳມັນຈາກຕາເວັນອອກກາງເຊັ່ນນັ້ນ ແລະ ຈະເຮັດໃຫ້ຕາເວັນອອກກາງບໍ່ມີເງິນຊື້ເກດສະໜາ ແລະ ເກດສະໜາຂາຍບໍ່ໄດ້. ແຕ່ການປູກກັນໃນປະຈຸບັນຍັງນັບເປັນເປີເຊັນໜ້ອຍທີ່ສຸດ ເກືອບບໍ່ມີຜົນກະທົບຕໍ່ການທີ່ຈະດຶງລາຄາເກດສະໜາໃຫ້ຕົກຕ່ຳເລີຍ.

## VI. ສະຫລຸບ

ໂຄງການປູກໄມ້ເກດສະໜາ ນອກຈາກການນໍາເອົາສານ ຫລື ຢາງເກດສະໜາໄປປຸງແຕ່ງ ເຮັດເປັນທົ່ວເຊື້ອນໍ້າຫອມ ແລະ ທູບທີ່ມີກິ່ນຫອມມີລາຄາແພງແລ້ວ ຍັງສາມາດໄປໃຊ້ໃນການແພດ ອີກ ກໍ່ຄືໄປຜະລິດຢາປົວພະຍາດທີ່ຫາຍາກເຊັ່ນ: ເສັ້ນປະສາດ, ກະເພາະອາຫານ...ແລະໂຄງການ ນີ້ຈະນໍາລາຍໄດ້ມາໃຫ້ແກ່ປະເທດຊາດ ເປັນເງິນຕາຕ່າງປະເທດ ເປັນຈໍານວນຫລວງຫລາຍ ນອກ ນັ້ນ ຍັງເປັນການປັບປຸງສະພາບແວດລ້ອມໃຫ້ມີຄວາມອຸດົມສົມບູນດີຍິ່ງຂຶ້ນ ເປັນການຊອກຫາທ່າ ແຮງຈາກເງື່ອນໄຂດິນຟ້າອາກາດໃນພື້ນທີ່ ເພື່ອສ້າງເສດຖະກິດໄດ້ເປັນຢ່າງດີ ເພາະໄມ້ເກດສະ ໜາ ເປັນໄມ້ລາຄາແພງ ແລະ ຫາໄດ້ຍາກໃນຍຸກປະຈຸບັນກໍ່ຄືອະນາຄົດ.

ພ້ອມກັນນັ້ນ ໂຄງການດັ່ງກ່າວ ຈະເປັນການສຶກສາຂໍ້ມູນຂອງນັກຮຽນ ແລະ ນັກສຶກສາທາງ ດ້ານວິທະຍາສາດ, ກະສິກໍາ ແລະ ອື່ນໆໄດ້ດີ ເພື່ອພັດທະນາຕໍ່ໄປໃນອະນາຄົດ. ຈະເປັນການ ຫລຸດຜ່ອນການຂຸດຄົ້ນໄມ້ເກດສະໜາຈາກທໍາມະຊາດ ມາເປັນສິນຄ້າໄດ້ຢ່າງດີ ແລະ ອີກຢ່າງ ໜຶ່ງ ແມ່ນຈະເຮັດໃຫ້ມີການດຶງດູດນັກລົງທຶນຈາກຕ່າງປະເທດໃຫ້ມາສົນໃຈໃນການລົງທຶນປະເທດ ເຮົາຫລາຍຂຶ້ນ.

### * ຜົນທີ່ໄດ້ຮັບຈາກການສຶກສາ

ໃນການສຶກສາຄັ້ງນີ້ ພວກຂ້າພະເຈົ້າຄາດວ່າ ຜົນຂອງການສຶກສາຈະເຮັດໃຫ້ພວກຂ້າພະເຈົ້າ ສາມາດຮັບຮູ້ໄດ້ດັ່ງນີ້:

<u>ຈຸດດີ</u>

- ຮູ້ໄດ້ເຖິງວຽກງານດ້ານກະສິກໍາ
  ກໍ່ແມ່ນວຽກງານໜຶ່ງທີ່ມີຄວາມສໍາຄັນຕໍ່ການພັດທະນາເສດ ຖະກິດ.
- ຮູ້ເຖິງອັດຕາຜົນຕອບແທນຂອງການດໍາເນີນການຜະລິດກະສິກໍາ,
  ໂດຍສະເພາະແມ່ນການ ປູກໄມ້ເກດສະໜາ ເປັນສິນຄ້າທີ່ສ້າງລາຍຮັບ
- ເພື່ອຍົກລະດັບຊີວິດການເປັນຢູ່ຂອງຊາວກະສິກອນ ໃຫ້ສູງຂຶ້ນ.

<u>ຈຸດອ່ອນ</u>

- ເນື່ອງຈາກໂຄງການບໍ່ໄດ້ຕັ້ງຢູ່ນະຄອນຫລວງຈຶ່ງບໍ່ມີຄວາມສາມາດໃນການໄປ ສໍາພັດຕົວ ຈິງ.
- ເອກະສານອ້າງອີງ ຢູ່ຢ່າງກະແຈກກະຈາຍ ຈຶ່ງຫຍຸ້ງຍາກໃນເກັບກໍາຂໍ້ມູນ.
- ການພົວພັນຕໍ່ກັບຜູ້ເຮັດວຽກຕົວຈິງເພື່ອເອົາຂໍ້ມູນ ແມ່ນມີຄວາມຫຍຸ້ງຍາກ.